ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ- ແລະ ຂົນສົ່ງ

ຫ້ອງການ

25021

ເລກທີ: /ຍທຂ.ຫກ

ນະຄອນຫຼວງວຽງຈັນ, ວັນທີ: 31 OCT 2018

ຮຽນ: ທ່ານ ເລຂາທິການສະພາປະຊາຊົນ ນະຄອນຫລວງວຽງຈັນ ທີ່ນັບຖື.

ເລື່ອງ: ຄຳສະເໜີຂອງປະຊາຊົນໃນບັ້ນລົງພົບປະປະຊາຊົນ ແລະເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ແລະ ສະພາປະຊາຊົນນະຄອນຫລວງວຽງຈັນ ຊຸດທີ I ຢູ່ເຂດເລືອກຕັ້ງທີ 7, ເມືອງຫາດຊາຍຟອງ.

- ອີງຕາມ ຂໍ້ຕົກລົງຂອງທ່ານ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 27252/ຍທຂ, ລົງວັນທີ 08 ທັນວາ 2017 ວ່າດ້ວຍການຈັດຕັ້ງ ແລະເຄື່ອນໄຫວຂອງຫ້ອງການ;
- ອີງຕາມ ສະໂນດນຳສົ່ງຄະນະເລຂາທິການສະພາປະຊາຊົນນະຄອນຫລວງວຽງຈັນ ສະບັບເລກທີ 492/ຄລ.ສປນວ, ລົງວັນທີ 03/10/ 2018;
- ອີງຕາມ ບົດລາຍງານຂອງກົມທາງນ້ຳ ສະບັບເລກທີ 24560/ຍທຂ.ກທນ, ລົງວັນທີ 26/10/2018;
- ອີງຕາມ ທິດຊີ້ນຳຂອງທ່ານ ລັດຖະມົນຕີ ຄັ້ງວັນທີ 9/10/2018.

ຫ້ອງການກະຊວງ ໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດລາຍງານມາຍັງທ່ານຊາບກ່ຽວກັບ ຄຳສະເໜີຂອງປະຊາຊົນ ທີ່ຕິດພັນກັບກະຊວງ ໂຍທາທິການ ແລະ ຂົນສົ່ງ ມີ 2 ຂໍ້ ຄື:

1. ສະເໜີກ່ຽວກັບການຂໍລົງທຶດລອງຂຸດຄົ້ນຫີນແຮ່-ຊາຍ ຂອງບໍລິສັດ ຈະເລີນເຊກອງ ທີ່ໃຊ້ເຮືອເວີນນົ້ມ ຢາກໃຫ້ພາກສ່ວນກ່ຽວຂ້ອງລົງມາກວດກາ ເພາະວ່າການດູດແມ່ນໃກ້ຕາຝັ່ງເຈື່ອນຫລາຍ.
2. ສະເໜີໃຫ້ຂັ້ນເທິງພິຈາລະນາ ກ່ຽວກັບການກໍ່ສ້າງຕ້ານຕາຝັ່ງເຈື່ອນໃຫ້ເຂດບ້ານລຽບແຄມນ້ຳຂອງ ທີ່ມີຄວາມສ່ຽງສູງ ເພື່ອປ້ອງກັນໄພທຳມະຊາດ ໃນພາຍໜ້າ ( ບ້ານ ຊາຍຟອງເໜືອ ດິນພັງລົງຫລາຍແລ້ວ).

ຕໍ່ກັບຄຳສະເໜີດັ່ງກ່າວກະຊວງ ຍທຂ ໄດ້ສົ່ງວິຊາການກ່ຽວຂ້ອງລົງສົມທົບກັບ ພະແນກ ຍທຂ ນະຄອນຫຼວງວຽງຈັນ ລົງກວດກາສະພາບຕົວຈິງຢູ່ຈຸດດັ່ງກ່າວ ໃນວັນທີ 16 ຕຸລາ 2018 ແລະ ໄດ້ປະຊຸມປຶກສາຫາລືຄົ້ນຄ້ວາວິທີແກ້ໄຂບັນຫາຕາມການສະເໜີດັ່ງກ່າວ, ສະຫຼຸບໄດ້ດັ່ງລຸ່ມນີ້:

1. ການຂຸດຄົ້ນຫີນແຮ່-ຊາຍ ຂອງບໍລິສັດ ຈະເລີນເຊກອງ

ບໍລິສັດຈະເລີນເຊກອງ ໄດ້ຂຸດຄົ້ນຫີນແຮ່-ຊາຍ ຢູ່ບ້ານຫາດຊາຍຟອງໃຕ້, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ ໃນນາມບໍລິສັດ ວົງສັກດາ ໃນປີ 2016 ເປັນຕົ້ນມາ ແລະ ໄດ້ຢຸດເຊົາກ່ອນວັນທີ 1 ເດືອນ ກໍລະກົດ ປີ 2018 (ກ່ອນລະດູຝົນ), ການຂຸດຄົ້ນຜ່ານມາແມ່ນບໍ່ມີໃບອະນຸຍາດຂຸດຄົ້ນ, ແຕ່ບໍລິສັດໄດ້ເສຍພັນທະອາກອນໃຫ້

ລັດ ໂດຍຜ່ານໜ່ວຍງານຄັງເງິນແຫ່ງຊາດປະຈຳເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ, ໃນປີ 2017, 2018 ບໍລິສັດຈະເລີນເຊກອງ ໄດ້ສະເໜີຫາພະແນກ ຍທຂ ນະຄອນຫຼວງວຽງຈັນ ເພື່ອຂໍອະນຸຍາດຂຸດຄົ້ນ ຢູ່ຈຸດບ້ານຊາຍຟອງໃຕ້ ແລະ ເພີ້ມເຕີມຈຸດບ້ານທ່າແຂກ ຕາມໃບຄຳຮ້ອງສະບັບລົງວັນທີ 01 ກັນຍາ 2017, ແຕ່ພະແນກ ຍທຂ ນະຄອນຫຼວງວຽງຈັນ ບໍ່ໄດ້ອອກໃບອະນຸຍາດໃຫ້ ເນື່ອງຈາກເອກະສານບໍ່ຄົບຖ້ວນ (ໃບທະບຽນວິສາຫະກິດບໍ່ໄດ້ລະບຸປະເພດທຸລະກິດຂຸດຄົ້ນຫີນແຮ່-ຊາຍ, ບໍ່ມີໃບຢັ້ງຢືນສິ່ງແວດລ້ອມ). ໄລຍະຫ່າງຈາກຈຸດຂຸດຄົ້ນບ້ານທ່າແຂກຫາຈຸດຕະຝັ່ງເຈື່ອນ 1 ກມ, ບ້ານຫາດຊາຍຟອງໃຕ້ ຫາຈຸດຕະຝັ່ງເຈື່ອນ 6 ກມ;

2. ສະພາບ ແລະ ສາເຫດການເຊາະເຈື່ອນຂອງຕະຝັ່ງ

ອີງຕາມບົດລາຍງານຂອງຫ້ອງການ ຍທຂ ເມືອງຫາດຊາຍຟອງ ສະບັບເລກທີ: 098/ຍທຂ.ຫຊຟ, ລົງວັນທີ 29/8/2018 ໃຫ້ຊາບວ່າ: ການເຊາະເຈື່ອນຂອງຕະຝັ່ງ ແມ່ນເກີດຂຶ້ນໃນຊ່ວງລະດູຝົນ ຢູ່ເຂດແດນລະຫວ່າງບ້ານທ່າແຂກ ແລະ ບ້ານຊາຍຟອງເໜືອ, ຕະຝັ່ງເຊາະເຈື່ອນທັງໝົດ 25 ຈຸດ, ມີລວງຍາວທັງໝົດ 800 ແມັດ, ແຕ່ລະຈຸດເຈື່ອນເຂົ້າສະເລ່ຍ 15 - 30 ແມັດ, ສາເຫດແມ່ນມາຈາກ: (1) ນ້ຳໄຫຼຫລອດພົ້ນ, (2)ຕະຝັ່ງເປັນດິນຊາຍແກມຕົມ, (3) ຄອງນ້ຳເລິກຢູ່ໃກ້ຕະຝັ່ງ ແລວນ້ຳກະທົບໃສ່ຕະຝັ່ງໂດຍກົງ ຍ້ອນເບື້ອງປະເທດໄທມີການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ.

3. ວິທີການ ແລະ ມາດຕະການແກ້ໄຂ

3.1 ຕໍ່ກັບການສະເໜີຂໍອະນຸຍາດຂຸດຄົ້ນຫີນແຮ່-ຊາຍ ຂອງບໍລິສັດ ຈະເລີນເຊກອງ ມອບໃຫ້ພະແນກ ຍທຂ ນະຄອນຫຼວງວຽງຈັນ ສົມທົບກັບ ພະແນກ ພະລັງງານ-ບໍ່ແຮ່, ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມນະຄອນຫລວງ ລົງສົມທົບກັບອຳນາດການປົກຄອງເມືອງ ແລະ ບ້ານ ປະເມີນຄວາມເປັນໄປໄດ້ ຈະສາມາດອະນຸຍາດໃຫ້ຂຸດຄົ້ນ ຫລື ຢຸດເຊົາ, ພ້ອມນັ້ນກໍ່ຕ້ອງໄດ້ກວດກາຄືນຖ້າບໍລິສັດໃດບໍ່ມີໃບອະນຸຍາດ ແມ່ນຫ້າມບໍ່ໃຫ້ຂຸດຄົ້ນເດັດຂາດ, ການອະນຸຍາດຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດຳ ຕ້ອງປະຕິບັດຕາມຂໍ້ຕົກລົງຂອງລັດຖະມົນຕີ ສະບັບເລກທີ 7737/ຍທຂ, ລົງວັນທີ 8/6/2010 ວ່າດ້ວຍລະບຽບການກ່ຽວກັບການຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດຳ ແລະ ບົດແນະນຳເພີ້ມເຕີມ ສະບັບເລກທີ 00467/ຍທຂ.ກຍນ, ລົງວັນທີ 15/1/2013 ກ່ຽວກັບການຂຸດຄົ້ນຫີນແຮ່, ຊາຍ ແລະ ດິນດຳ.

3.2 ສຳລັບການແກ້ໄຂຈຸດຕະຝັ່ງທີ່ມີການເຊາະເຈື່ອນເຂດບ້ານ ຊາຍຟອງເໜືອ ນັ້ນ, ພະແນກ ຍທຂ ນະຄອນຫຼວງວຽງຈັນ ໄດ້ລາຍງານແຜນບູລິມະສິດ ປີ 2019 ໂດຍຈັດເປັນບູລິມະສິດທີ 4 ແລະ ອີງຕາມງົບປະມານການລົງທຶນ ທີ່ກະຊວງ ຍທຂ ໄດ້ຮັບອະນຸມັດຈາກສະພາແຫ່ງຊາດ ໃນແຕ່ລະປີມີຈຳກັດ, ຈຶ່ງມອບໃຫ້ ພະແນກ ຍທຂ ນະຄອນຫລວງວຽງຈັນ ນຳສະເໜີທ່ານ ເຈົ້າຄອງນະຄອນຫລວງວຽງຈັນ ເອົາເຂົ້າໃນແຜນງົບປະມານລົງທຶນປະຈຳປີຂອງນະຄອນຫຼວງວຽງຈັນ ຫຼື ນຳສະເໜີລັດຖະບານ ພິຈາລະນາເປັນອັນສະເພາະ.

ດັ່ງນັ້ນ, ຈຶ່ງໄດ້ລາຍງານມາຍັງທ່ານເພື່ອຮັບຊາບ ຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມນັບຖື.

ຫົວໜ້າຫ້ອງການ

ບ່ອນສົ່ງ:
- ທ່ານ ລັດຖະມົນຕີ, ຮອງລັດຖະມົນຕີ " ເພື່ອລາຍງານ"
- ສຳເນົາ.